# ກອງປະຊຸມທຸລະກິດ ຄັ້ງທີ 14

## ຕາຕະລາງ ຂໍ້ສະເໜີ ທີ່ໄດ້ຮັບການແກ້ໄຂແລ້ວ
## (ປັບປຸງໃນວັນທີ 22 ມີນາ 2023)

2023

# ຕາຕະລາງ ຂໍ້ສະເໜີ ທີ່ໄດ້ຮັບການແກ້ໄຂແລ້ວ (ປັບປຸງໃນວັນທີ 22 ມີນາ 2023)

| ບັນຫາ | ຂະແໜງການກ່ຽວຂ້ອງຫຼັກ | ຂໍ້ສະເໜີ | ອ້າງອີງ |
|---|---|---|---|
| 1 | ກະຊວງອຸດສາຫະກຳ ແລະ ການຄ້າ | ສະເໜີໃຫ້ ກະຊວງອຸດສາຫະກຳ ແລະ ການຄ້າ ຮັບເປັນເຈົ້າການປະສານກັບກະຊວງທີ່ກ່ຽວຂ້ອງ ໃນການປັບປຸງຂັ້ນຕອນການອອກໃບອະນຸຍາດດຳເນີນທຸລະກິດ ໃຫ້ມີຄວາມຈະແຈ້ງ ແລະ ສະດວກ. ສະເໜີໃຫ້ກະຊວງ ອຄ ກຳນົດໃບອະນຸຍາດດຳເນີນທຸລະກິດທີ່ເປັນບູລິມະສິດໃນການປັບປຸງ ແລະມີກຳນົດເວລາໃນການປັບປຸງລາຍການບູລິມະສິດດັ່ງກ່າວ | • ອີງຕາມບົດບັນທຶກກອງປະຊຸມທຸລະກິດລາວຄັ້ງທີ 13 (ເດືອນກໍລະກົດ ປີ 2021)ແລະ ບົດລາຍງານຄວາມຄືບໜ້າການປັບປຸງຂັ້ນຕອນການອອກອະນຸຍາດດຳເນີນທຸລະກິດ ໂດຍຫ້ອງການກະຊວງ ອຄ (ເດືອນ ພະຈິກ, 2022), ກະຊວງອຸດສາຫະກຳ ແລະ ການຄ້າ ໄດ້ເອົາໃຈໃສ່ລົງເລິກຮ່ວມເຮັດວຽກກັບຂະແໜງການ ທີ່ກ່ຽວຂ້ອງສຳເລັດທັງໝົດ 15 ກະຊວງ ແລະ ໄດ້ກຳນົດໃບອະນຸຍາດດຳເນີນທຸລະກິດທີ່ເປັນບູລິມະສິດໃນການປັບປຸງ. |
| 2 | ກະຊວງອຸດສາຫະກຳ ແລະ ການຄ້າ | ສະເໜີໃຫ້ມີຊ່ອງທາງໃນການເຂົ້າເຖິງຂໍ້ມູນຂັ້ນຕອນ, ເງື່ອນໄຂ ແລະ ຂໍ້ກຳນົດຕ່າງໆຂອງຂະແໜງການກ່ຽວຂ້ອງທີ່ຕິດພັນກັບເງື່ອນໄຂຂອງການອອກໃບອະນຸຍາດດຳເນີນທຸລະກິດ ແບບ ອອນ ລາຍ, ຫຼື ນຳໃຊ້ຕົວກາງໃນການກະຈາຍຂໍ້ມູນເຫຼົ່ານັ້ນໃຫ້ພາກທຸລະກິດ ເຊັ່ນ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ແລະ ສະພາການຄ້າຕ່າງປະເທດ ໃນສປປ ລາວ ເປັນຕົ້ນ. | • ເວບໄຊທ໌ ຂໍ້ມູນຂັ້ນຕອນ ແລະ ເງື່ອນໄຂກ່ຽວກັບການຂໍອະນຸຍາດດຳເນີນທຸລະກິດ http://www.bned.moic.gov.la/lo ຂອງກະຊວງ ອຄ ແມ່ນຖືກປະກາດນຳໃຊ້ຢ່າງເປັນທາງການໃນຕົ້ນປີ 2023 |
| 3 | ກະຊວງອຸດສາຫະກຳ ແລະ ການຄ້າ | ປັບປຸງຄວາມໂປ່ງໃສ ແລະ ແຈ້ງພາກເອກະຊົນຕໍ່ກັບອັດຕາພາສີຕ່າງໆ ຜ່ານສູນຂໍ້ມູນຂ່າວສານທາງດ້ານການຄ້າແຫ່ງ ສປປ ລາວ (Lao Trade Portal) ໂດຍໃຫ້ມີການປັບປຸງຂໍ້ມູນຢ່າງເປັນປົກກະຕິ ແລະ ສ້າງໃຫ້ເປັນຈຸດເຂົ້າຫາແຫຼ່ງຂໍ້ມູນຫຼັກ. | • ເວບໄຊທ໌ ສູນຂໍ້ມູນຂ່າວສານດ້ານການຄ້າ ຂອງກະຊວງ ອຄ, https://www.laotradeportal.gov.la/ |
| 4 | ກະຊວງອຸດສາຫະກຳ ແລະ ການຄ້າ | ສະເໜີໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ສ້າງກົນໄກເພື່ອ ເປັນໃຈກາງປະສານກັບຂະແໜງຕ່າງໆທີ່ກ່ຽວຂ້ອງ ເພື່ອອຳນວຍຄວາມສະດວກໃຫ້ແກ່ການຂົນສົ່ງສິນຄ້າ ພາຍໃນປະເທດ | • ອີງໃສ່ຄຳສັ່ງ 12/ນຍ |

| ບັນຫາ | ຂະແໜງການກ່ຽວຂ້ອງຫຼັກ | ຂໍ້ສະເໜີ | ອ້າງອີງ |
|---|---|---|---|
| 5 | ກະຊວງອຸດສາຫະກຳ ແລະ ການຄ້າ | ສະເໜີໃຫ້ ກະຊວງ ອຸດສາຫະກຳ ແລະ ການຄ້າ ພິຈາລະນາຄືນ ກ່ຽວກັບການຈັດຕັ້ງປະຕິບັດ ຂໍ້ຕົກລົງ ຂອງກະຊວງອຸດສາຫະກຳແລະການຄ້າ ເລກທີ 1006/ອຄ.ຄພນ ລົງວັນທີ 22 ພຶດສະພາ 2015 ວ່າດ້ວຍການສ້າງຕັ້ງສະພາການຄ້າຕ່າງປະເທດປະຈຳ ສປປ ລາວ, ເພື່ອອຳນວຍຄວາມສະດວກໃຫ້ແກ່ການສ້າງຕັ້ງ ແລະ ດຳເນີນວຽກງານຂອງສະພາການຄາຕ່າງປະເທດ ພ້ອມທັງໃຫ້ນັກລົງທຶນຕ່າງປະເທດມີບົດບາດສ່ວນຮ່ວມໃນ ສະພາການຄ້າ ຕ່າງປະເທດ ຫຼາຍຂຶ້ນ ເນື່ອງຈາກຜ່ານມາໄດ້ມີການຈັດຕັ້ງປະຕິບັດບາງເງື່ອນໄຂທີ່ບໍ່ໄດ້ກຳນົດໃນຂໍ້ຕົກລົງ ຂອງກະຊວງອຸດສາຫະກຳແລະການຄ້າ ເລກທີ 1006/ອຄ.ຄພນ ໂດຍສະເພາະແມ່ນເງື່ອນໄຂທີ່ວ່າ ປະທານສະພາການຄ້າປະເທດໃດ ຕ້ອງແມ່ນຄົນສັນຊາດນັ້ນເປັນປະທານ ທີ່ເຄີຍໄດ້ປະຕິບັດຜ່ານມາ. | • ອີງຕາມການແຈ້ງຕອບຂອງຮອງລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ໃນກອງປະຊຸມປຶກສາຫາລືກະກຽມກອງປະຊຸມທຸລະກິດລາວ ຄັ້ງວັນທີ 21 ມີນາ 2022: ຂໍ້ຕົກລົງ ຂອງກະຊວງອຸດສາຫະກຳແລະການຄ້າ ເລກທີ 1006/ອຄ.ຄພນ ລົງວັນທີ 22 ພຶດສະພາ 2015 ໄດ້ກຳນົດວ່າ ກໍລະນີການສະເໜີສ້າງຕັ້ງສະພາການຄ້າຕ່າງປະເທດໃດໜຶ່ງທີ່ປະທານບໍ່ແມ່ນຄົນສັນຊາດນັ້ນ ແມ່ນສາມາດແຕ່ງຕັ້ງໄດ້ ກໍ່ຕໍ່ເມື່ອໄດ້ຮັບການຢັ້ງຢືນຈາກສະຖານທູດ ຫຼື ກົງສູນຂອງປະເທດນັ້ນ ປະຈຳ ສປປ ລາວ. ສຳລັບປະເທດທີ່ບໍ່ມີສະຖານທູດ ຫຼື ກົງສຸນ ຕັ້ງຢູ່ ສປປ ລາວ ແມ່ນຕ້ອງມີເອກະສານຢັ້ງຢືນຈາກກະຊວງການຕ່າງປະເທດ ສປປ ລາວ. ນອກຈາກປະທານສະພາການຄ້າຕ່າງປະເທດປະຈຳ ສປປ ລາວແລ້ວ ຜູ້ທີ່ຈະເຂົ້າຮ່ວມເປັນຄະນະບໍລິຫານ ຫຼື ສະມາຊິກໃນຮູບແບບຕ່າງໆ ແມ່ນສາມາດເຂົ້າຮ່ວມໄດ້ເລີຍ ໂດຍບໍ່ຕ້ອງມີໜັງສືຈາກສະຖານທູດ. ໃນນີ້ໝາຍຄວາມວ່າ ເງື່ອນໄຂທີ່ວ່າ ປະທານສະພາການຄ້າປະເທດໃດ ຕ້ອງແມ່ນຄົນສັນຊາດນັ້ນເປັນປະທານທີ່ໄດ້ປະຕິບັດຜ່ານມາ ຈະບໍ່ໄດ້ນຳມາຈັດຕັ້ງປະຕິບັດໃນຕໍ່ໜ້າ. ສະນັ້ນໃນເມື່ອ ຂໍ້ຕົກລົງ ຂອງກະຊວງອຸດສາຫະກຳແລະການຄ້າ ເລກທີ 1006/ອຄ.ຄພນ ບໍ່ໄດ້ລະບຸກຳນົດເງື່ອນໄຂດັ່ງກ່າວ ກໍ່ອາດບໍ່ມີຄວາມຈຳເປັນປັບປຸງເພີ່ມເຕີມ. ຢ່າງໃດກໍ່ຕາມ ສຳລັບການປັບປຸງ ຂໍ້ຕົກລົງ ຂອງກະຊວງອຸດສາຫະກຳແລະການຄ້າ ເລກທີ 1006/ອຄ.ຄພນ ລົງວັນທີ 22 ພຶດສະພາ 2015 ແມ່ນນອນຢູ່ໃນແຜນປັບປຸງໃນອະນາຄົດ ແຕ່ການກຳນົດເວລາຊັດເຈນຕ້ອງເປັນໄປຕາມຂັ້ນຕອນການສ້າງ ແລະ ປັບປຸງນິຕິກຳ.<br>• ເຫັນວ່າຂໍ້ສະເໜີນີ້ໄດ້ຮັບການແກ້ໄຂແລ້ວ ໂດຍຜ່ານການປັບປ່ຽນວິທີການຕີຄວາມໝາຍນິຕິກຳທີ່ມີຢູ່ ໂດຍກະຊວງອຸດສາຫະກຳ ແລະ ການຄ້າ, ໂດຍໄດ້ຮັບການເຫັນດີ ຈາກກອງປະຊຸມປຶກສາຫາລືກະກຽມກອງປະຊຸມທຸລະກິດລາວ ໃນ ວັນທີ 21 ມີນາ 2023 |
| 6 | ກະຊວງອຸດສາຫະກຳ ແລະ ການຄ້າ | ສະເໜີໃຫ້ມີການສ້າງ ແລະ ປັບປຸງກົດລະບຽບ ແລະ ກົດໝາຍ ທີ່ຈະສະໜັບສະໜູນຂະບວນການກໍ່ຕັ້ງ ແລະ ດຳເນີນທຸລະກິດຂອງ - ເຊັ່ນ ກົດລະບຽບຄຸ້ມຄອງ ທຸລະກິດ ແບບ ອອນລາຍ, ກົດລະບຽບຄຸ້ມຄອງ ການຄ້າຜ່ານລະບົບ ອີເລັກໂຕນິກ ເປັນຕົ້ນ. | • ດຳລັດວ່າດ້ວຍການຄ້າທາງເອເລັກໂຕຣນິກ (296/ລບ, 12/04/2022) ໄດ້ຖືກເຜີຍແຜ່ລົງໃນຈົດໝາຍເຫດທາງລັດຖະການ ແລະ ມີຜົນບັງຄັບໃຊ້ |
| 7 | ກະຊວງໂຍທາທິການ ແລະ ຂົນສົ່ງ | ສະເໜີໃຫ້ ບໍລິສັດ ລົດໄຟ ລາວ-ຈີນ ຮ່ວມກັບ ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ ຈັດກອງປະຊຸມ ສຳມະນາ ເຜີຍແຜ່ຂໍ້ມູນດ້ານການໃຫ້ບໍລິການ, ປະເພດສິນຄ້າ ທີ່ສາມາດຂົນສົ່ງ ແລະ ລາຄາຄ່າບໍລິການຂົນສົ່ງແກ່ຜູ້ປະກອບການ ຮັບຊາບ, ເພື່ອໃຫ້ສາມາດເຂົ້າເຖິງບໍລິການຂອງລົດໄຟ ລາວ-ຈີນ ຢ່າງແທ້ຈິງ. | • ບັນທຶກກອງປະຊຸມ ສຳມະນາເຜີຍແຜ່ຂໍ້ມູນດ້ານຂັ້ນຕອນ, ເງື່ອນໄຂ ແລະ ຄ່າທຳນຽມ ທີ່ຕິດພັນກັບການຂົນສົ່ງສິນຄ້າຂ້າມແດນ, ຜ່ານແດນ ແລະ ການຂົນສົ່ງຜູ້ໂດຍສານ ຜ່ານທາງລົດໄຟລາວ-ຈີນ ຄັ້ງວັນທີ 31/08/2022 ພ້ອມທັງ ວິດີໂອບັນທຶກກອງປະຊຸມ ໄດ້ຖືກເຜີຍແຜ່ທາງຊ່ອງທາງເວັບໄຊທ໌, ເຟສບຸກ ແລະ ຢູທູບຂອງ ສຄອຊ<br>• ບົດສະເໜີລາຍລະອຽດກ່ຽວກັບຂໍ້ມູນດ້ານຂັ້ນຕອນ, ເງື່ອນໄຂ ແລະ ຄ່າທຳນຽມທີ່ຕິດພັນກັບການຂົນສົ່ງສິນຄ້າຂ້າມແດນ, ຜ່ານແດນ ແລະ ການຂົນສົ່ງຜູ້ໂດຍສານ ຜ່ານທາງລົດໄຟລາວ-ຈີນ ເຜີຍແຜ່ຜ່ານທາງ ເວບໄຊທ໌ ສຄອຊ ທັງພາສາລາວ ແລະ ພາສາອັງກິດ. |
| 8 | ກະຊວງແຜນການ ແລະ ການລົງທຶນ | ສະເໜີໃຫ້ລັດຖະບານ ລາຍງານການຈັດຕັ້ງປະຕິບັດ ຄຳສັ່ງ ເລກທີ 02/ນຍ ແລະ 03/ນຍ , ນະຄອນຫຼວງວຽງຈັນ ວັນທີ 21 ມັງກອນ 2020 ເປັນແຕ່ລະໄລຍະເລື້ອຍໆ. | • ກອງປະຊຸມລາຍງານວຽກງານພົ້ນເດັ່ນ ການຈັດຕັ້ງປະຕິບັດຄຳສັ່ງເລກທີ 02/ນຍ ແລະ 03/ນຍ ໂດຍ ກະຊວງແຜນການ ແລະ ການລົງທຶນ ຖືກຈັດຂຶ້ນທຸກໆ 6 ເດືອນ |

| ບັນຫາ | ຂະແໜງການກ່ຽວຂ້ອງຫຼັກ | ຂໍ້ສະເໜີ | ອ້າງອີງ |
|---|---|---|---|
| 9 | ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ | ສະເໜີໃຫ້ອຳນວາຍຄວາມສະດວກໃຫ້ແກ່ຂັ້ນຕອນການເຂົ້າມາຂອງນັກທອ່ງທ່ຽວ ໃນໄລຍະໂຄວິດ19ຄື:<br><br>1. ເພື່ອຫລຸດຜ່ອນຂັ້ນຕອນການປະກອບເອກະສານ ແລະ ການປະກອບເອກະສານທີ່ຊໍ້າຊ້ອນ, ສະເໜີໃຫ້ເລືອກລະບົບໃດລະບົບໜຶ່ງ ລະຫວ່າງ ເອກະສານການນຳນັກທ່ອງທ່ຽວເຂົ້າມາ-Telex ຫລື ລະບົບ Green Pass ແຕ່ບໍ່ແມ່ນໃຫ້ເຮັດທັງສອງ. ກະຊວງ ຖະແຫລງຂ່າວວັດທະນາທຳ ແລະ ທ່ອງທ່ອງ, ກະຊວງພາຍໃນ ແລະ ກະຊວງ ເຕັກໂນໂລຊີ ແລະ ການສື່ສານຄວນ ຕົກລົງກັນເປັນເອກະພາບໃນການຕັດສິນໃຈວ່າຈະເລືອກໃຊ້ຮູບແບບໃດໃນການຈັດຕັ້ງປະບັດ<br><br>2. ສະເໜີໃຫ້ມີການເປີດປະເທດຢາງເຕັມຮູບແແບສຳລັບໄລຍະທີ່ 2 ເລີ້ມແຕ່ເດືອນເມສາ ຫລື ມີນາ ເປັນຕົ້ນໄປ ແລະ ໃຫ້ການບໍລິການ Visa ກັບດ່ານຄືເກົ່າ ແລະ eVisa ເພື່ອຄວາມສະດວກຂອງນັກທ່ອງທ່ຽວທີ່ເຂົ້າມາ ໂດຍຫລຸດເງື່ອນໄຂການເຂົ້າມາຂອງນັກທ່ອງທ່ຽວ. ຖ້າຫາກເປີດປະເທດຢ່າງເຕັມຮູບແບບ ກໍ່ຄວນຈະລົບລ້າງເງື່ອນໄຂການສະແດງ QR ຫລື COE (ເອກະສານອະນຸຍາດເຂົ້າມາຂອງກະຊວງການຕ່າງປະເທດ) ອີກ<br><br>3. ສະເໜີ ໃຫ້ມີໜ່ວຍງານປະຕູດຽວທີ່ສາມາດໃຫ້ຂໍ້ມູນທີ່ຖືກຕ້ອງ ແລະ ມີການປະສານງານຢ່າງເປັນລະບົບ ຢ່າງໃກ້ຊິດຂອງແຕ່ລະກະຊວງທີ່ກ່ຽວຂ້ອງ ໂດຍສະເພາະລະຫວ່າງຜູ້ຈັດຕັ້ງປະຕິບັດຕົວຈິງກັບຜູ້ທີ່ວາງລະບຽບການ ເພື່ອໃຫ້ການປະສານງານມີຄວາມຄ່ອງໂຕ ສາມາດແກ້ໄຂບັນຫາໄດ້ວ່ອງໄວ ແລະ ທັນເວລາ, ແລະ ການໃຫ້ຂໍ້ມູນມີຄວາມຖືກຕ້ອງເປັນເອກະພາບ ແລະ ໜ້າເຊື່ອຖື 5:49<br><br>4. ສະເໜີ ອະນຸຍາດໃຫ້ລົດຂອງບໍລິສັດທ່ອງທ່ຽວ ຫລື ໂຮງແຮມສາມາດມາຮັບສົ່ງນັກທ່ອງທ່ຽວຢູ່ສະໜາມບິນ ຫລື ດ່ານສາກົນໄດ້ ແລະ ໃຫ້ປະຕິບັດຕາມມາດຕະຖານ LaoSafe ຫລື ມາດຕະຖານປ້ອງການຂອງຄະນະສະເພາະກິດ ເພື່ອຄວາມສະດວກວ່ອງໄວໃນການບໍລິການ ແລະ ເພື່ອເປັນການຫລຸດຜ່ອນການເສຍເວລາໃນການເດີນທາງ ແລະ ຄ່າໃຊ້ຈ່າຍທີ່ເພີ້ມຂຶ້ນ. | • ແຈ້ງການທິດຊີ້ນຳກ່ຽວກັບ ມາດຕະການໃນການເຂົ້າ-ອອກ ສປປ ລາວ ແລະ ມາດຕະການຜ່ອນຜັນພາຍໃນປະເທດ ໃນໄລຍະມີການລະບາດຂອງພະຍາດໂຄວິດ-19 |
| 10 | ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ | ສະເໜີໃຫ້ພາກເອກະຊົນເຂົ້າມາມີສ່ວນຮ່ວມໃນການພັດທະນາແຫລ່ງທ່ອງທ່ຽວຂອງລັດ ເພື່ອໃຫ້ສະຖານທີ່ທ່ອງທ່ຽວຕ່າງໆໄດ້ຮັບການພັດທະນາ, ບູລະນະ ແລະ ປັບປຸງການບໍລິການ ແລະ ຄຸ້ມຄອງໃຫ້ດີຂຶ້ນ. | • ອີງຕາມໜັງສືແຈ້ງຕ້ອງຂອງກະຊວງ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເລກທີ 57/ຖວທ ລົງວັນທີ 15 ກຸມພາ 2023, ກະຊວງຖະແຫຼງຂ່າວດ ວັດທະນະທຳ ແລະ ທ່ອງທ່ຽວ ຍິນດີສະໜັບສະໜູນ ບົນພື້ນຖານກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ແລະ ດຳລັດວ່າດ້ວຍການລົງທຶນຮ່ວມລະຫວ່າງພາກລັດ ແລະ ພາກເອກະຊົນ, ແລະ ນິຕິກຳທີ່ກ່ຽວຂ້ອງອື່ນໆ |

| ບັນຫາ | ຂະແໜງການກ່ຽວຂ້ອງຫຼັກ | ຂໍ້ສະເໜີ | ອ້າງອີງ |
|---|---|---|---|
| 11 | ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແລະ ກະຊວງຊັບພະຍາກອນ ທຳມະຊາດ ແລະ ສິ່ງແວດລ້ອມ | ສະເໜີໃຫ້ພິຈາລະນາ ປັບປຸງ ຄ່າທຳນຽມ ແລະ ຄ່າບໍລິການດ້ານສິ່ງແວດລ້ອມ ທີ່ ລະບຸໃນລັດຖະບັນຍັດ ເລກທີ 002/ປປທ ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ໂດຍ ແຍກຄ່າທຳນຽມດ້ານສິ່ງແວດລ້ອມ ລະຫວ່າງໂຄງການພັດທະນາການທ່ອງທ່ຽວທີ່ອີງໃສ່ການອະນຸ ລັກທຳມະຊາດ ອອກຈາກຄ່າທຳນຽມດ້ານສິ່ງແວດລ້ອມຂອງໂຄງການປະເພດອື່ນ ຫຼື ຫຼຸດຄ່າທຳນຽມ ສຳລັບການປະເມີນ ຜົນກະທົບທາງດ້ານສັງຄົມ ແລະ ສິ່ງແວດລ້ອມ (ESIA) | • ອີງໃສ່ໜັງສືແຈ້ງຕອບຈາກກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເລກທີ 0253 ລົງວັນທີ 15 ກຸມພາ 2023: ໃນໄລຍະ ກ່ອນປີ 2022 ແມ່ນໄດ້ປະຕິບັດຕາມລັດຖະບັນຍັດປະທານປະເທດ ສະບັບເລກທີ 003/ປປທ ລົງວັນທີ 26 ທັນວາ 2012, ໂດຍສະເພາະ ແມ່ນມາດຕາ 77 ຂໍ້ທີ 2 ທີ່ໄດ້ກຳນົດຄ່າໃບຢັ້ງຢືນບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມຈຳນວນ 1 ລ້ານກີບ ແລະ ມາດຕາ 83 ຂໍ້ 2 ທີ່ໄດ້ກຳນົດຄ່າບໍລິການກວດຜ່ານບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ (ESIA) ລວມທັງແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ (EMMP) ຈຳນວນ 36 ລ້ານກີບ ລວມເປັນເງິນທັງໝົດ 37 ລ້ານກີບ. ແຕ່ປະຈຸບັນ ແມ່ນໄດ້ປະຕິບັດຕາມລັດຖະບັນຍັດປະທານປະເທດ ເລກທີ 002/ປປທ, ລົງວັນທີ 17 ມິຖຸນາ 2021 ໃນມາດຕາ 25 ຂໍ້ 6.2 ທີ່ໄດ້ກຳນົດຄ່າໃບຢັ້ງຢືນບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ຈຳນວນ 1 ລ້ານກີບ ແລະ ມາດຕາ 26 ຂໍ້ 4.2 ຄ່າທົບທວນບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ທຳມະຊາດ ລວມທັງແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ແລະ ທຳມະຊາດ ຈຳນວນ 10 ລ້ານກີບ ລວມທັງໝົດ 11 ລ້ານກີບ, ເຊິ່ງເຫັນວ່າ ຫຼຸດລົງຈຳນວນ 26 ລ້ານກີບ.<br>• ຜູ້ປະກອບການເຫັນວ່າ ສາມາດຮັບໄດ້ ຖ້າຫາກມີການຈັດຕັ້ງປະຕິບັດ ຕາມຄ່າທຳນຽມໃໝ່ທີ່ກຳນົດໃນລັດຖະບັນຍັດປະທານປະເທດ ເລກທີ 002/ປປທ ສະນັ້ນ ຂໍ້ສະເໜີນີ້ຖືວ່າໄດ້ຮັບການແກ້ໄຂ |
| 12 | ທະນາຄານ ແຫ່ງ ສປປ ລາວ | ເພີ່ມຄວາມຢືດຢຸ່ນເທື່ອລະໜ້ອຍ ໃນການການກຳນົດອັດຕາແລກປ່ຽນ ໂດລາ-ກີບ ເພື່ອຄ່ອຍໆຫັນໄປນຳໃຊ້ຮູບແບບອັດຕາແລກປ່ຽນລອຍຕົວຕາມກົນໄກຕະຫຼາດ. ອັດຕາແລກປ່ຽນອີງຕາມກົນໄກຕະຫຼາດຊ່ວຍສົ່ງເສີມໃຫ້ສາມາດມີການແລກປ່ຽນເງິນຕາລ່ວງໜ້າເຊິ່ງເປັນໜຶ່ງໃນເຄື່ອງມືໃນການຈຳກັດຄວາມສ່ຽງທີ່ຈະຊ່ວຍໃຫ້ບັນດາບໍລິສັດຕ່າງໆສາມາດບໍລິຫານຈັດການຄວາມສ່ຽງດ້ານອັດຕາແລກປ່ຽນຂອງຕົນ ພ້ອມທັງຊ່ວຍໃຫ້ມີການນຳໃຊ້ ການຊື້ຂາຍລະຫວ່າງທະນາຄານ (interbank market) ໃຫ້ຫຼາຍຂຶ້ນ ແລະ ສົ່ງເສີມໃຫ້ມີການແຂ່ງຂັນໃນຕະຫຼາດແລກປ່ຽນເງິນຕາ ຢ່າງເປັນທຳຫຼາຍຂຶ້ນ. | • ຂໍ້ຕົກລົງກ່ຽວກັບການກຳນົດອັດຕາແລກປ່ຽນອ້າງອີງລະຫວ່າງເງິນກີບກັບເງິນໂດລາສະຫະລັດ ແລະ ການກຳນົດອັດຕາແລກປ່ຽນຂອງທະນາຄານທຸລະກິດ ແລະ ຮ້ານແລກປ່ຽນ (801/ທຫລ, 15-10-2015)<br>• ຂໍ້ຕົກລົງວ່າດ້ວຍການກຳນົດອັດຕາແລກປ່ຽນ (525/ທຫລ, 15-09-2021)<br>• ຂໍ້ຕົກລົງວ່າດ້ວຍການກຳນົດອັດຕາແລກປ່ຽນ (779/ທຫລ, 11-10-2022) ມາດຕາ 3 ຂໍ້ 1 ໄດ້ລະບຸກຳນົດອັດຕາແລກປ່ຽນສຳລັບການຊື້ ຫຼື ຂາຍເງິນກີບກັບເງິນໂດລາສະຫະລັດໄດ້ໃນຂອບເຂດບໍ່ເກີນ ± 4.5% (ກ່ອນໜ້ານີ້ ແມ່ນກຳນົດ ±0.25 ໃນຂໍ້ຕົກລົງ 801/ທຫລ ປີ 2015, ແລະ ±1.5% ໃນຂໍ້ຕົກລົງ 525/ທຫລ, ປີ 2021 ) ທຽບໃສ່ອັດຕາແລກປ່ຽນອ້າງອີງທີ່ກົມນະໂຍບາຍເງິນຕາປະກາດອອກໃນແຕ່ລະວັນ ແລະ ສ່ວນຕ່າງລະຫວ່າງອັດຕາຊື້-ອັດຕາຂາຍ ບໍ່ເກີນ 1%. |

| ບັນຫາ | ຂະແໜງການກ່ຽວຂ້ອງຫຼັກ | ຂໍ້ສະເໜີ | ອ້າງອີງ |
|---|---|---|---|
| 13 | ທະນາຄານ<br>ແຫ່ງ ສປປ ລາວ | ເພີ່ມຜົນສັກສິດໃນການຈັດຕັ້ງປະຕິບັດຕາມກົດລະບຽບ ທີ່ຕິດພັນກັບການກໍານົດອັດຕາແລກປ່ຽນຂອງທະນາຄານທຸລະກິດ ແລະ ບັນດາຮ້ານແລກປ່ຽນ ໂດຍການຈັດຕັ້ງປະຕິບັດມາດຕະການລົງໂທດຕໍ່ບັນດາ ສະຖາບັນ ຫຼື ຮ້ານແລກປ່ຽນທີ່ບໍ່ປະຕິບັດຕາມກົດລະບຽບທີ່ ທຫລ ກໍານົດ.<br><br>• ກວດສອບ ແລະ ລະບຸ ບັນດາຕະຫຼາດແລກປ່ຽນຄູ່ຂະໜານເຫຼົ່ານີ້ ໂດຍເບິ່ງຈາກທີ່ມາຂອງການສະໜອງເງິນໂດລາສະຫະລັດ ມາເປັນເງິນກີບ (ເຊັ່ນ ຈາກຜູ້ສົ່ງອອກ)<br><br>• ເພີ່ມບົດລົງໂທດໃຫ້ກັບບໍລິສັດທີ່ ຂາຍສິນຄ້າ ຫຼື ການບໍລິການ ຕາມອັດຕາທີ່ຢູ່ນອກກອບທີ່ທະນາຄານແຫ່ງ ສປປ ລາວ ກໍານົດ ໃນເວລາເຮັດໃບເກັບເງິນເປັນໂດລາ ແລະ ກີບ. | • ທະນາຄານ ແຫ່ງ ສປປ ລາວ ໄດ້ອອກ ແຈ້ງການກ່ຽວກັບການຫັນຮ້ານແລກປ່ຽນເງິນຕາໄປເປັນຮ້ານຕົວແທນຂອງທະນາຄານທຸລະກິດໃນການດໍາເນີນທຸລະກິດແລກປ່ຽນເງິນຕາ (758/ກນງ, 12-07-2021 ແລະ 111/ທຫລ, 12-08-2021);<br><br>• ທະນາຄານ ແຫ່ງ ສປປ ລາວ ໄດ້ອອກ ແຈ້ງການກ່ຽວກັບ ຮ້ານແລກປ່ຽນເງິນຕາຕົວແທນຂອງທະນາຄານທຸລະກິດທີ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ (175/ຫກ, 17-09-2021 ແລະ 340/ຫກ, 14-11-2022);<br><br>ທະນາຄານ ແຫ່ງ ສປປ ລາວ ໄດ້ ອອກຂໍ້ຕົກລົງ ເລກທີ 449/ທຫລ ລົງວັນທີ 14 ມິຖຸນາ 2022 ວ່າດ້ວຍການບໍລິການແລກປ່ຽນເງິນຕາ ຂອງທະນາຄານທຸລະກິດ ແລະ ຮ້ານແລກປ່ຽນເງິນຕາຕົວແທນ ເພື່ອຄຸ້ມຄອງການບໍລິການແລກປ່ຽນເງິນຕາ ຂອງທະນາຄານທຸລະກິດ ແລະ ຮ້ານແລກປ່ຽນເງິນຕາຕົວແທນ ໃຫ້ມີຄວາມເປັນລະບຽບຮຽບຮ້ອຍ ແນໃສ່ເຮັດໃຫ້ການດຸ່ນດ່ຽງລະຫວ່າງຄວາມຕ້ອງການ ກັບການສະໜອງເງິນຕາຕ່າງປະເທດໃນສັງຄົມສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ. |
| 14 | ທະນາຄານ<br>ແຫ່ງ ສປປ ລາວ | ສະເໜີ ເພີ່ມການບັງຄັບໃຊ້ກົດລະບຽບທີ່ຕິດພັນຢ່າງເຂັ້ມງວດ ໂດຍກວມເອົາ ບັນຫາຜູ້ໃຫ້ບໍລິການດ້ານການເງິນທັງໝົດ (ເຊັ່ນ ທະນາຄານ, ສະຖາບັນການເງິນຈຸລະພາກ, ບໍລິສັດເຊົ່າສິນເຊື່ອ) ເຂົ້າໃນຖານຂໍ້ມູນຂ່າວສານສິນເຊື່ອ | ອີງຕາມຄໍາຕອບຂອງທ່ານຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ ໃນກອງປະຊຸມປຶກສາຫາລືກະກຽມກອງປະຊຸມທຸລະກິດລາວຄັ້ງທີ 14 ຄັ້ງວັນທີ 21 ມີນາ 2022: ເຫັນວ່າ ທະນາຄານທຸລະກິດທັງໝົດ 39 ແຫ່ງ ໄດ້ເຂົ້າເປັນສະມາຊິກທັງໝົດແລ້ວ, ສ່ວນສະຖາບັນການເງິນອື່ນໆທີ່ບໍ່ແມ່ນທະນາຄານ 153 ແຫ່ງ ໃນທັງໝົດ 249 ແຫ່ງ ກໍ່ໄດ້ເຂົ້າເປັນສະມາຊິກແລ້ວ, ສ່ວນທີ່ເຫຼືອ 96 ແຫ່ງ ແມ່ນສະຖາບັນການເງິນຂະໜາດນ້ອຍ ເຊິ່ງລວມກັນແລ້ວມີບັນຊີລູກຄ້າກວມເອົາພຽງແຕ່ 4% ຂອງສິນເຊື່ອທົ່ວລະບົບ. ໝາຍຄວາມວ່າ ທະນາຄານ ແລະ ສະຖາບັນການເງິນທີ່ເຂົ້າເປັນສະມາຊິກແລ້ວ ມີບັນຊີລູກຄ້າທີ່ກວມເອົາ 96% ຂອງຈໍານວນສິນເຊື່ອທັງໝົດໃນທົ່ວປະເທດ. |
| 15 | ກະຊວງການເງິນ | ສະເໜີໃຫ້ ກະຊວງການເງິນ ຫຼຸດຜ່ອນພັນທະອາກອນຂອງພາກທຸລະກິດ ໂດຍສະເພາະ ຫົວໜ່ວຍທຸລະກິດທີ່ປິ່ນອ້ອມການທ່ອງທ່ຽວ ໂດຍຫຼັງຈາກທີ່ມີການໄລ່ລຽງອາກອນຂອງປີ 2019 ແລ້ວ, ສະເໜີໃຫ້ເລື່ອນເວລາຊໍາລະອາກອນຂອງປີ 2019 ໄປອີກ ສອງງວດ | ແຈ້ງການຂອງຫ້ອງການກະຊວງການເງິນ (0764/ຫກງ, 21 ເມສາ 2020)<br>ໄດ້ປະຕິບັດຕາມຂໍ້ສະເໜີ |
| 16 | ກະຊວງການເງິນ | ສະເໜີ ຕັດຂັ້ນຕອນການຈົດທະບຽນເອກະສານຫລັກຊັບຄໍ້າປະກັນສໍາຫຼັບຊັບສິນຄົງທີ່ກັບກົມຄຸ້ມຄອງຊັບສິນແຫ່ງລັດ | • ອີງຕາມໜັງສືຕອບຈາກກົມຄຸ້ມຄອງທະນາຄານທຸລະກິດ ສະບັບເລກທີ 516/ກຄທ, ລົງວັນທີ 17 ມິຖຸນາ 2020 ເຊິ່ງໄດ້ຮວບຮວມຄໍາຕອບຈາກຂະແໜງການທີ່ກ່ຽວຂ້ອງທີ່ຕິດພັນກັບບັນຫານີ້ ໄດ້ແຈ້ງວ່າ ສໍາລັບປະເພດສັນຍາເງິນກູ້ ແລະ ຫຼັກຊັບຄໍ້າປະກັນ ແມ່ນບໍ່ໄດ້ຈັດຕັ້ງປະຕິບັດຢູ່ກົມຄຸ້ມຄອງຊັບສິນຂອງລັດ |

| ບັນຫາ | ຂະແໜງການກ່ຽວຂ້ອງຫຼັກ | ຂໍ້ສະເໜີ | ອ້າງອີງ |
|---|---|---|---|
| 17 | ກະຊວງການເງິນ | ສະເໜີຫຼຸດຜ່ອນອັດຕາພາສີນຳເຂົ້າອຸປະກອນໄອຊີທີ, ຈັດຕັ້ງປະຕິບັດຄຳໝັ້ນສັນຍາ ຕາມຕາຕະລາງເວລາໃນການຫລຸດຜ່ອນອັດຕາພາສີພາຍໃຕ້ສັນຍາ ATIGA ແລະ ສັນຍາວ່າດ້ວຍເຕັກໂນໂລຊີຂໍ້ມູນຂ່າວສານ ພາຍໃຕ້ຂອບອົງການການຄ້າໂລກ (ITA) ແລະ ສັນຍາ ITA ເພີ່ມເຕີມ ຢ່າງເຕັມສ່ວນ ແລະ ເປັນເອກະພາບ. | • ອີງຕາມໜັງສືແຈ້ງຕອບຂອງກົມພາສີ ສະບັບເລກທີ 00801/ກພສ ລົງວັນທີ 09 ກຸມພາ 2023: ການນຳເຂົ້າອຸປະກອນໄອທີ ໃນຂອບສັນຍາການຄ້າເສລີອາຊຽນ (ATIGA), ອາຊຽນ-ຈີນ (ACFTA), ອາຊຽນ-ອົດສະຕາລີ-ນິວຊີແລນ (AANZFTA), ອາຊຽນ-ອິນເດຍ (AITFA) ແມ່ນມີອັດຕາພາສີ 0%, ສ່ວນຂອບການຄ້າອື່ນໆ ເຊັ່ນ: WTOF AJTFA, APTA ແມ່ນມີອັດຕາພາສີ 5%. ກົມພາສີຈະສືບຕໍ່ສົມທົບກັບພາກສ່ວນກ່ຽວຂ້ອງ (ກົມນະໂຍບາຍການຄ້າຕ່າງປະເທດ) ເຈລະຈາກັບຄູ່ຮ່ວມສັນຍາການຄ້າເສລີ ເພື່ອຫຼຸດຜ່ອນອັດຕາພາສີໃນອະນາຄົດ)<br>• ເຫັນວ່າຂໍ້ສະເໜີນີ້ໄດ້ຮັບຄຳຕອບທີ່ຊັດເຈນແລ້ວ |
| 18 | ກະຊວງການເງິນ | ຮ່ວມກັບ ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ ແລະ ສະມາຄົມ LICA ເພື່ອຈັດການຝຶກອົບຮົມ ການໂຄສະນາເຜີຍແຜ່ກ່ຽວກັບການປັບປຸງອັດຕາພາສີ ຫຼື ນິຕິກຳຕ່າງໆທີ່ຕິດພັນ. | • ຈະໄດ້ມີການເຊັນບົດບັນທຶກຄວາມເຂົ້າໃຈ ລະຫວ່າງກົມພາສີ ແລະ ສຄອຊ ໃນ ເດືອນ ເມສາ 2023 ເພື່ອຮ່ວມກັນຈັດປະຊຸມພົບປະລະຫວ່າງ ກົມພາສີ ແລະ ພາກທຸລະກິດຢ່າງເປັນປະຈຳທຸກໆ 6 ເດືອນ |
| 19 | ກະຊວງເຕັກໂນໂລຢີ ແລະ ການສື່ສານ | ສະເໜີໃຫ້ກຳນົດຂະແໜງການ ຫຼື ໜ່ວຍງານສະເພາະ ທີ່ເປັນເຈົ້າການໃນການກຳນົດນະໂຍບາຍສົ່ງເສີມ ແລະ ປະສານງານສຳລັບວຽກງານສົ່ງເສີມ Startup ຢ່າງຊັດເຈນ | • ກົດໝາຍວ່າດ້ວຍກົດໝາຍວ່າດ້ວຍ ການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ (ສະບັບປັບປຸງ) ໄດ້ເພີ່ມມາດຕາສະເພາະ ກ່ຽວກັບການສົ່ງເສີມສະຕາດອັບ<br>• ອີງຕາມ ການລາຍງານຄວາມຄືບໜ້າ ໂດຍ ສູນສົ່ງເສີມ ແລະ ຖ່າຍທອດ ເຕັກໂນໂລຊີ, ກະຊວງ ເຕັກໂນໂລຢີ ແລະ ການສື່ສານ (ພະແນກສົ່ງເສີມສະຕາດອັບ) ໃນເດືອນຕຸລາ 2022) ກະຊວງ ເຕັກໂນໂລຢີ ແລະ ການສື່ສານ ໄດ້ກຳນົດໃຫ້ ສູນສົ່ງເສີມ ແລະ ຖ່າຍທອດ ເຕັກໂນໂລຊີ ໃນ ກະຊວງ ເຕັກໂນໂລຢີ ແລະ ການສື່ສານ ເປັນໜ່ວຍງານທີ່ເປັນເຈົ້າການໃນການສົ່ງເສີມສະຕາດອັບ |
| 20 | ກະຊວງເຕັກໂນໂລຢີ ແລະ ການສື່ສານ | ສະເໜີໃຫ້ມີການເຂົ້າຮ່ວມຂອງພາກທຸລະກິດ ເພື່ອປະກອບຄຳຄິດເຫັນເຂົ້າໃນການສ້າງນະໂຍບາຍສົ່ງເສີມສະຕາດອັບ. | • ການລາຍງານຄວາມຄືບໜ້າ ໂດຍ ສູນສົ່ງເສີມ ແລະ ຖ່າຍທອດ ເຕັກໂນໂລຊີ, ກະຊວງ ເຕັກໂນໂລຢີ ແລະ ການສື່ສານ (ພະແນກສົ່ງເສີມສະຕາດອັບ) ໃນເດືອນຕຸລາ 2022) ແມ່ນຜ່ານມາ ໄດ້ເຮັດວຽກຮ່ວມກັບສະມາຄົມໄອຊີທີ ລາວ ໃນການກະກຽມຮ່າງດຳລັດສົ່ງເສີມສະຕາດອັບ |
| 21 | ກະຊວງກະສິກຳ ແລະ ປ່າໄມ້ | ສະເໜີໃຫ້ຂະແໜງການທີ່ກ່ຽວຂ້ອງ ສະໜອງຂໍ້ມູນກ່ຽວກັບ ການຈຳແນກປະເພດກະສິກຳ ຕ່າງໆ ແລະ ຂັ້ນຕອນການຢັ້ງຢືນກະສິກຳສະອາດ ທີ່ຜູ້ປະກອບການສາມາດເຂົ້າເຖິງໄດ້ງ່າຍ | • ອີງຕາມບົດບັນທຶກກອງປະຊຸມປຶກສາຫາລື ລະຫວ່າງພາກລັດ ແລະ ພາກທຸລະກິດ ບັນຫາທີ່ຕິດພັນກັບກະສິກຳ ຄັ້ງວັນທີ 01 ທັນວາ 2020: ຂໍ້ມູນກ່ຽວກັບ ການຈຳແນກປະເພດກະສິກຳ ຕ່າງໆ ແລະ ຂັ້ນຕອນການຢັ້ງຢືນກະສິກຳສະອາດ ໂດຍກົມປູກຝັງ ແມ່ນສາມາດເບິ່ງໄດ້ໃນເວບໄຊທ ຂອງ ສຄອຊ, ຫຼື ສາມາດຮັບເອົາຂໍ້ມູນດັ່ງກ່າວ (ສະບັບຕີພິມ) ໄດ້ທີ່ກົມປູກຝັງ ຂອງກະຊວງກະສິກຳ ແລະ ປ່າໄມ້ |